## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 13 ເມສາ 2008 ( 04-13-2008 )

## ຄົ້ນຫາທາງຖວາຍຕົວ:

**ຂໍ້ພຣະຄັມພີໃນບົດຮຽນ:** (ປະຖົມມະການ 22:1-14, 17-18)

**ຄຳຖາມແຫ່ງຊີວິດ:** ທ່ານຈະຍອມໄປໄກປານໃດໃນການຖວາຍຕົວຕໍ່ພຣະເຈົ້າ?

**ຄວາມຈິງໃນພຣະຄັມພີ:** ພຣະເຈົ້າທົດສອບຄົນຂອງພຣະອົງ ໃນການຖວາຍຕົວຂອງເຂົາຕໍ່ພຣະອົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ອຍທ່ານໃຫ້ທ່ານຄົ້ນຫາຫົນທາງໃໝ່ໃນຄວາມເຊື່ອຂອງທ່ານໂດຍ:

- ພິຈາຣະນາເບິ່ງວ່າພຣະເຈົ້າອາດຈະທົດສອບການຖວາຍຕົວຂອງທ່ານທີ່ມີຕໍ່ພຣະອົງ ແລະ
- ຕັດສິນໃຈວ່າຈະໃຫ້ການຖວາຍຕົວຂອງທ່ານຈະເຣີນຂຶ້ນໃນເວລາທ່ານຖືກທົດລອງ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ຮຽກຮ້ອງໃຫ້ມາສົນໃຈເຣື່ອງຊີວິດ. ຄຳຖາມໃນອາທິດນີ້: ຂ້າພະເຈົ້າຈະຍອມໄປໄກຫລາຍປານໃດໃນການຖວາຍຕົວຂອງຂ້າພະເຈົ້າຕໍ່ພຣະເຈົ້າ? ໃຫ້ຖາມນັກຮຽນເຖິງຄວາມໝາຍຂອງການຖວາຍຕົວ (ອຸທິດຕົນ) ໃຫ້ພຣະເຈົ້າ. ບອກນັກຮຽນວ່າ: ໃນບົດຮຽນມື້ນີ້ຈະທ້າທາຍເຂົາເຈົ້າຜ່ານທາງການຖວາຍຕົວ ຂອງອັບຣາຮາມທີ່ມີຕໍ່ພຣະເຈົ້າ.
- ນຳພານັກຮຽນບອກຊື່ໃນທາງທີ່ຜູ້ທີ່ເຊື່ອທັງຫລາຍໄດ້ຖວາຍຕົວ (ອຸທິດຕົນ) ຕໍ່ພຣະເຈົ້າ, ແລ້ວຂຽນຄຳເຫັນຂອງແຕ່ລະຄົນໃສ່ກະດານ. ໃຫ້ຜູ້ນຶ່ງອາສາສມັກເວົ້າເຣື່ອງການທົດສອບວ່າ ຊ່ອຍໃຫ້ພວກເຮົາຈະເຣີນຂຶ້ນໃນການຖວາຍຕົວ ແດ່ພຣະເຈົ້າແບບໃດ?

1. <u>ຄວາມເຊື່ອໄດ້ຖືກທົດສອບ:</u> ( ປະຖົມມະການ 22:1-2)

- ຂໍໃຫ້ນັກຮຽນອາສາສມັກອ່ານ (ປະຖົມມະການ 22:1-2) .
- ໃຫ້ນັກຮຽນອ່ານຂໍ້ 1-2 ງຽບ ໆ (ບໍ່ອອກສຽງ) ແລ້ວເອົາຊື່ເຂົາເຈົ້າເອງ ແລະຊື່ລູກຊາຍຂອງລາວເອງ ຫລື ເອົາຈາກຄອບຄົວອື່ນມາເປັນອັບຣາຮາມ ແລະອີຊາກ. ຖາມວ່າ ພົນການຍອມຮັບໃນການເຂົ້າມາແທນທີ່ອັບຣາຮາມນັ້ນຈະຮັບໄດ້ເໝືອນອັບຣາຮາມໜ້ອຍຫລາຍຊໍ່າໃດ.
- ການເຜົາສັດຖວາຍຊຶ່ງເປັນການລົບລ້າງຄວາມຜິດບາບ ຫລືຖວາຍໃຫ້ແດ່ພຣະເຈົ້າ. ຖາມວ່າ: ຄວາມຈິງໃນເຣື່ອງນີ້ນັ້ນ ແມ່ນຫຍັງທີ່ພຣະເຈົ້າໄດ້ຊົງບອກໃຫ້ອັບຣາຮາມທໍາ?
- ເນັ້ນເຖິງການທີ່ພຣະເຈົ້າໃຫ້ອັບຣາຮາມຖວາຍອີຊາກເພາະດ້ວຍເຫດໃດ, ໃຫ້ອ່ານເບິ່ງວ່າພຣະເຈົ້າບໍ່ໄດ້ອະນຸຍາດໃຫ້ເຜົາມະນຸດຖວາຍ ໃນພຣະທັມຣະບຽບພວກເລວີ 18:21; 20:1-5; ເຢເຣມີຢາ 7:31.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ປະຖົມມະການ 22:1-2)

1. ການທົດສອບໃນທາງໃດທີ່ເຮັດໃຫ້ພວກເຮົາເຂັ້ມແຂງ ແລະທາງໃດທີ່ເຮັດໃຫ້ອ່ອນແອທາງຄວາມເຊື່ອຂອງພວກເຮົາ?
2. ຕາມການນຶກຄິດຂອງທ່ານໃນການທີ່ອັບຣາຮາມທໍາໃນຂັ້ນແຮກຕໍ່ຄໍາສັ່ງຂອງພຣະເຈົ້ານັ້ນແມ່ນຫຍັງ? ຖ້າທ່ານເປັນອັບຣາຮາມທ່ານຈະເຮັດຢ່າງໃດໃນຂັ້ນແຮກທີ່ພຣະເຈົ້າຊົງສັ່ງທ່ານ?
3. ແມ່ນຫຍັງທີ່ເປັນການກະທໍາທີ່ຍາກທີ່ສຸດຕໍ່ການທົດສອບຢ່າງນີ້?
4. ຖ້າອັບຣາຮາມຕົກຕໍ່ການທົດສອບ (ບໍ່ທໍາຕາມ)ຈະມີຫຍັງເກີດຂຶ້ນ?

2. <u>ການເຊື່ອຟັງຢ່າງແຂງແຮງ:</u> (ປະຖົມມະການ 22:3-10)

- ຂໍໃຫ້ອາສາສມັກອ່ານພຣະທັມ ປະຖົມມະການ 22:3-10
- ຈັດນັກຮຽນເປັນກຸ່ມນ້ອຍ ໆ ແລະຢາຍເຈັ້ຽແລະສໍໃຫ້ແຕ່ລະກຸ່ມ ແລ້ວແນະນໍາເຂົາເຈົ້າໃຫ້ຂຽນ ແລະແຕ້ມທີ່ບອກເຖິງການກະທໍາຂອງອັບຣາຮາມ ແລະອີຊາກ ໃນຂໍ້ທີ 3-10. ໃຫ້ເວລາແຕ່ລະກຸ່ມນໍາມາອະທິບາຍ, ໂຊໃຫ້ເຫັນ ແລະແບ່ງປັນໃນຫ້ອງຮຽນດ້ວຍ.
- ອັບຣາຮາມທໍາດ້ວຍຄວາມເຊື່ອຟັງ, ທັງໆ ທີ່ລາວບໍ່ໄດ້ຮັບຣາຍລະອຽດໝົດທຸກຢ່າງ. ຊຶ່ງຊີ້ໃຫ້ເຫັນວ່າ, ພວກເຮົາກໍເໝືອນກັບອັບຣາຮາມນັ້ນແຫລະ, ພວກເຮົາກໍສາມາດ ແລະຄວນຕອບສນອງພຣະເຈົ້າດ້ວຍຄວາມເຊື່ອ.
- ການທົດສອບຢ່າງນີ້ເຮັດໃຫ້ອັບຣາຮາມຈົດຈໍ່ຢູ່ກັບພຣະເຈົ້າ.
- ເຣື່ອງຄວາມເຊື່ອຟັງຂອງອັຣາຮາມເປັນຫຍັງຈຶ່ງເຖິງຂັ້ນຈັບມີດຂຶ້ນມາ? ເຣື່ອງຄວາມໄວ້ວາງໃຈໃນພຣະເຈົ້າຂອງລາວເດເປັນແນວໃດ?

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ປະຖົມມະການ 22:3-10)

1. ແມ່ນຫຍັງທີ່ເປັນການຕອບສນອງການທົດສອບຄວາມເຊື່ອຂອງທ່ານທີ່ສະແດງອອກເຖິງເຣື່ອງທີ່ທ່ານໄດ້ກ່ອນ? ທີ່ຜ່ານມາແມ່ນການທົດສອບອັນໃດທີ່ຊ່ອຍໃຫ້ທ່ານໄດ້ຈົດຈໍ່ໃນພຣະເຈົ້າຫລາຍ?

2. ການທົດສອບແບບໃດທີ່ຊ່ອຍໃຫ້ພວກເຮົາເຂັ້ມແຂງໃນພຣະເຈົ້າຫລາຍຂື້ນ?
3. ເປັນຫຍັງຈຶ່ງວ່າການທົດສອບຈະຊ່ອຍໃຫ້ພວກເຮົາມີຄວາມສະດວກໃນການແບ່ງປັນຄວາມເຊື່ອຂອງພວກເຮົາຫລາຍຂື້ນ?

## 3. ບຳເນັດຂອງການເຊື່ອຟັງ: (ປະຖົມມະການ 22:11-14,17-18)

- ຂໍໃຫ້ອາສາສມັກອ່ານພຣະທັມ ປະຖົມມະການ 22:11-14,17-18
- **"ພຣະເຈົ້າຈະຈັດຕຽມໃຫ້"**
- ສົນທະນາກັນເຖິງຄວາມໝາຍຂອງຄຳວ່າ "ຮູ້" ໃນຂໍ້ທີ 12. ໃຫ້ຄວາມສຳຄັນຊຶ່ງຜ່ານການອັບຣາຮາມໄດ້ປະເຊີນກັບການທົດສອບຈາກພຣະເຈົ້າ ອັບຣາຮາມໄດ້ມີຄວາມສັດທາໃນພຣະເຈົ້າກ່ອນ. ໜູນໃຈນັກຮຽນໃຫ້ຢູ່ໃນຄວາມສງົບໃນເມື່ອປະເຊີນກັບການທົດສອບຂອງເຂົາເຈົ້າ.
- ລັກສະນະພິເສດໃນການຈັດຕຽມລູກແກະ, ນຳພານັກຮຽນກັບໄປຫາຂໍ້ທີ 17-18 ໃນທິດທາງຂອງການທີ່ພຣະເຈົ້າຊົງອວຍພອນໃຫ້ແກ່ອັບຣາຮາມ. ຂຽນສິ່ງເຫລົ່ານີ້ໃສ່ກະດານ. ໃຊ້ເມັດຊາຍໃນການຊ່ອຍນັກຮຽນໃຫ້ນຶກເຖິງຄຳສັນຍາທີ່ພຣະເຈົ້າໃຫ້ແກ່ອັບຣາຮາມມີລູກຫລານຫລາຍເໝືອນເມັດຊາຍ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ປະຖົມມະການ 22:11-14,17-18)

1. ພຣະເຈົ້າໄດ້ຊົງອວຍພອນໃນທາງໃດ ຫລືອຳນາດໃຫ້ແກ່ທ່ານ? ທ່ານຈະຕອບສນອງການອວຍພອນຂອງພຣະເຈົ້າຢ່າງໃດ?
2. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງສັນຍາວ່າຈະອວຍພອນໃຫ້ທຸກຊົນຊາດໂດຍຜ່ານທາງອັບຣາຮາມ ໃຫ້ຜູ້ເປັນລູກຫລານຂອງອັບຣາຮາມເປັນພິເສດທີ່ມີຄ່າມາກໃຫ້ແກ່ພໍ່ແມ່? ແມ່ນຫຍັງທີ່ທ່ານໄດ້ອ້ອນວອນຕໍ່ພຣະເຈົ້າສຳລັບລູກຂອງທ່ານ?
3. ທ່ານຈະປຽບທຽບການທົດສອບຂອງທ່ານຢ່າງໃດທີ່ທ່ານມີໂອກາດໄດ້ຍອມເຊື່ອຟັງພຣະເຈົ້າ ແລະຕັ້ງຢູ່ໃນຄວາມຮັກໃນພຣະອົງ?

## ບົດຮຽນພຣະຄັມພີແຫ່ງຄວາມຈິງ:

- ພຣະເຈົ້າຊົງທົດສອບຄວາມເຊື່ອຂອງພວກເຮົາເພື່ອໃຫ້ພວກເຮົາເປັນໄພ່ພົນອັນແທ້ຈິງຂອງພຣະອົງ.
- ຜູ້ທີ່ເຊື່ອທັງຫລາຍທີ່ຈັດຕຽມໃຫ້ພຣະເຈົ້າຄວນຈະເປັນຄົນທີ່ເຂັ້ມແຂງຊຶ່ງເຂົາຄວນຈະເຊື່ອໄວ້ວາງໃຈໃນພຣະເຈົ້າໃນທຸກກໍຣະນີ.
- ພຣະເຈົ້າຈະຊົງຕອບແທນການການເຊື່ອຟັງຂອງພວກເຮົາ, ຈະຈັດຕຽມທຸກຢ່າງທີ່ເຮົາຕ້ອງການພວກເຮົາສົມຄວນໃຫ້ກຽດຍ້ອງຍໍສັຣເສີນພຣະອົງຢູ່ສເມີ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )